ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ "CLEAR" (P178545)

ແຜນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ

14 ມີນາ 2023

ກະກຽມໂດຍ:

ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ)

ຄວາມໝາຍຂອງຄຳຫຍໍ້

CDD	ການພັດທະນາໂດຍຊຸມຊົນເປັນເຈົ້າ
EG	ກຸ່ມຊົນເຜົ່າ
ESA	ການປະເມີນຜົນສິ່ງແວດລ້ອມ ແລະ ສັງຄົມ
ESCP	ແຜນພັນທະສັນຍາດ້ານສິ່ງແວດລ້ອມ ແລະ ສັງຄົມ
ESF	ຂອບດ້ານສິ່ງແວດລ້ອມ ແລະ ສັງຄົມ
ESMF	ຂອບການຄຸ້ມຄອງ ສິ່ງແວດລ້ອມ ແລະ ສັງຄົມ
ESO	ພະນັກງານສິ່ງແວດລ້ອມ ແລະ ສັງຄົມ
ESS	ມາດຕະຖານດ້ານສິ່ງແວດລ້ອມ ແລະ ສັງຄົມ
FGD	ການແບ່ງກຸ່ມສົນທະນາ
IP	ຊາວພື້ນເມືອງ
NGO	ອົງກອນຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ
PG	ກຸ່ມຜູ້ຜະລິດ
PMU	ໜ່ວຍງານຄຸ້ມຄອງໂຄງການ
RP	ແຜນຈັດສັນຍົກຍ້າຍ
RPF	ຂອບນະ�โยบายການຈັດສັນຍົກຍ້າຍ
SEP	ແຜນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ
SEA	ການຂູດຮີດ ແລະ ລ່ວງລະເມີດທາງເພດ
SH	ການລ່ວງລະເມີດທາງເພດ
SHG	ກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ
VAC	ຄວາມຮຸນແຮງຕໍ່ເດັກນ້ອຍ
VIT	ທີມງານຈັດຕັ້ງປະຕິບັດຂັ້ນບ້ານ
VSMC	ຄະນະຄຸ້ມຄອງກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຂັ້ນບ້ານ
WB	ທະນາຄານໂລກ
UXO	Unexploded Ordnance / ລະເບີດທີ່ບໍ່ທັນແຕກ

ຄຳນິຍາມ

ການບໍລິໂພກອາຫານທີ່ຫຼາກຫຼາຍ. ບັນຊີລາຍການອາຫານທີ່ມີຄຸນນະພາບທີ່ຫຼາກຫຼາຍ. ທີ່ສຸມໃສ່ ໂພຊະນາການ ຂອງກຸ່ມຄົນອ່ອນແອ, ໂດຍສະເພາະເດັກນ້ອຍອາຍຸລະຫວ່າງ 6 ຫາ 23 ເດືອນ.

ບຸກຄົນ/ຄອບຄົວດ້ອຍໂອກາດ ໝາຍເຖິງບຸກຄົນ ຫຼື ກຸ່ມຄົນທີ່ໄດ້ຮັບຜົນກະທົບທາງລົບ ຈາກໂຄງການ ແລະ/ຫຼື ມີຂໍ້ຈຳກັດ ໃນການໄດ້ຮັບຜົນປະໂຫຍດຈາກໂຄງການ ຍ້ອນສະພາບທາງດ້ານ: ອາຍຸ, ເພດ, ຄວາມພິການ, ສຸຂະພາບ, ເສດຖະກິດ ແລະ ຊົນເຜົ່າ ເຫຼົ່ານີ້ເປັນຕົ້ນ. ບຸກຄົນ/ກຸ່ມຄົນທີ່ດ້ອຍໂອກາດ ແມ່ນມັກ ຈະຖືກຍົກເວັ້ນ ຫຼື ບໍ່ສາມາດເຂົ້າຮ່ວມຢ່າງເຕັມສ່ວນ ໃນຂະບວນການປຶກສາຫາລືທົ່ວໄປ ແລະ ອາດຈະຕ້ອງການຄວາມຊ່ວຍເຫຼືອສະເພາະ ເພື່ອສົ່ງເສີມການເຂົ້າຮ່ວມຂອງເຂົາເຈົ້າ. ໃນ ໂຄງການນີ້, ບຸກຄົນ/ກຸ່ມຄົນຜູ້ທີ່ດ້ອຍໂອກາດ ແມ່ນໄດ້ກຳນົດເປັນຜູ້ທີ່ມີຄຸນລັກສະນະ ດັ່ງນີ້: i) ຈາກກຸ່ມຊົນເຜົ່າ, (ii) ຜູ້ທີ່ມີທີ່ດິນທຳການຜະລິດທີ່ຈຳກັດ, (iii) ແມ່ຍິງທີ່ເປັນຫົວໜ້າຄອບຄົວ, (iv) ຢູ່ເຮືອນຂາດແຮງງານເພດຊາຍ (ເຊັ່ນ: ແຮງງານເຄື່ອນທີ່); (v) ການຫວ່າງງານ ຫຼື ໂອກາດ ທາງເສດຖະກິດທີ່ຈຳກັດ; (vi) ສະມາຊິກໃນຄອບຄົວເປັນພະຍາດຊໍ້າເຮື້ອ ຫຼື ພິການ; (vii) ຜູ້ ເຖົ້າທີ່ອາໄສຢູ່ຕາມລຳພັງ; (viii) ຄູ່ຜົວເມຍ ໜຸ່ມນ້ອຍທີ່ມີລູກ (ການແຕ່ງງານແຕ່ຍັງນ້ອຍ), (ix) ດຳລົງຊີວິດພາຍໃຕ້ເງື່ອນໄຂທີ່ຫຍຸ້ງຍາກ ແລະ (x) ບໍ່ມີເງື່ອນໄຂຂ້າງເທິງ ແຕ່ໄດ້ຮັບການເຫັນດີ ຈາກຊຸມຊົນວ່າເຂົາເຈົ້າມີຄວາມສ່ຽງຕໍ່ຄວາມທຸກຍາກ ແລະ ຕ້ອງການການຊ່ວຍເຫຼືອຈາກ ໂຄງການ ເພື່ອຫຼຸດຜ່ອນຄວາມອ່ອນແອຂອງພວກເຂົາ. ຄວາມອ່ອນແອຂອງບຸກຄົນສ່ວນຫຼາຍ ແມ່ນມາຈາກຄວາມທຸກຍາກ ຫຼື ຄອບຄົວທີ່ທຸກຍາກ.

ການເຂົ້າຮ່ວມ. ໝາຍເຖິງ ຊາວບ້ານທຸກຄົນ ມີສິດສ່ວນຮ່ວມ ແລະ ໄດ້ຮັບຜົນປະໂຫຍດຈາກຂະບວນການພັດທະນາ. ການເຂົ້າຮ່ວມແມ່ນກວມເອົານະໂຍບາຍ ສົ່ງເສີມຄວາມສະເໝີພາບ ແລະ ບໍ່ແບ່ງແຍກ ດ້ວຍການປັບປຸງການເຂົ້າເຖິງ ຂອງໝົດທຸກຄົນ ລວມທັງຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດ ກັບການບໍລິການ ແລະ ຜົນປະໂຫຍດ ເຊັ່ນ: ການສຶກສາ, ສາທາລະນະສຸກ, ການປົກປ້ອງສັງຄົມ, ໂຄງລ່າງພື້ນຖານ, ພະລັງງານທີ່ສາມາດຊື້ໄດ້, ການຈ້າງງານ, ການບໍລິການທາງ ດ້ານການເງິນ ແລະ ຜົນຜະລິດ. ນອກຈາກນີ້ ຍັງລວມເອົາການດຳເນີນການ ເພື່ອທຳລາຍສິ່ງກີດຂວາງ ຕໍ່ຜູ້ທີ່ມັກຖືກ ກີດຂວາງບໍ່ໄດ້ເຂົ້າຮ່ວມ ໃນຂະບວນການພັດທະນາ ເຊັ່ນ: ແມ່ຍິງ, ເດັກນ້ອຍ, ຄົນພິການ, ຊາວໜຸ່ມ ແລະ ຊົນເຜົ່າ ພ້ອມ ທັງຮັບປະກັນໃຫ້ທຸກຄົນສາມາດປະກອບຄຳຄິດຄຳເຫັນ.

ຊົນເຜົ່າພື້ນເມືອງ. ອີງຕາມກອບດ້ານສິ່ງແວດລ້ອມ ແລະ ສັງຄົມຂອງທະນາຄານໂລກ ຄຳວ່າ "ຊົນເຜົ່າພື້ນເມືອງ/ຊຸມ ຊົນທ້ອງຖິ່ນແບບດັ້ງເດີມຂອງເຂດຊາຮາຣາ ອາຟຣິກາ ທີ່ບໍ່ໄດ້ຮັບການອະນຸລັກທາງປະຫວັດສາດ "ແມ່ນຖືກນຳໃຊ້ໃນ ຄວາມໝາຍທົ່ວໄປເພື່ອອ້າງເຖິງກຸ່ມທີ່ ຈຳແນກວ່າມີຄວາມແຕກຕ່າງທາງດ້ານວັດທະນະທຳ ແລະ ສັງຄົມ ເຊິ່ງມີລະດັບ ແລະ ມີລັກສະນະດັ່ງຕໍ່ໄປນີ້:

- ພິຈາລະນາຕົນເອງ ເປັນສະມາຊິກຂອງກຸ່ມວັດທະນະທຳ ແລະ ສັງຄົມພື້ນເມືອງ ແລະ ຖືກຮັບຮູ້ເອກະລັກນີ້ໂດຍ ການຈຳແນກຂອງຜູ້ອື່ນ;

- ການຍຶດຕິດກັບທີ່ຢູ່ອາໄສທີ່ແຕກຕ່າງກັນທາງພູມສັນຖານ, ອານາເຂດຂອງບັນພະບຸລຸດ, ຫຼື ພື້ນທີ່ການນຳໃຊ້ ຫຼື ອາຊີບຕາມລະດູການ ເຊັ່ນດຽວກັນກັບຊັບພະຍາກອນທຳມະຊາດໃນເຂດເຫຼົ່ານີ້;
- ວັດທະນະທຳປະເພນີ, ເສດຖະກິດ, ສັງຄົມ, ຫຼື ໂຄງສ້າງທາງການເມືອງທີ່ແຕກຕ່າງກັນ ຫຼື ແຍກອອກຈາກສັງຄົມ ຫຼື ວັດທະນະທຳສັງຄົມສ່ວນໃຫຍ່, ແລະ
- ຄວາມແຕກຕ່າງດ້ານພາສາ ເຊິ່ງມັກຈະແຕກຕ່າງຈາກພາສາທາງການ ຫຼື ພາສາຂອງປະເທດ ຫຼື ພາກພື້ນທີ່ເຂົາເຈົ້າອາໄສຢູ່.

ການເຜີຍແຜ່ຂໍ້ມູນ-ຂ່າວສານ. ຂະບວນການເຜີຍແຜ່ຂໍ້ມູນ-ຂ່າວສານຂອງໂຄງການ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ເພື່ອໃຫ້ເຂົາເຈົ້າໄດ້ເຂົ້າໃຈ ຄວາມສ່ຽງ ແລະ ຜົນກະທົບຂອງໂຄງການ ແລະ ໂອກາດທີ່ຜົນກະທົບອາດຈະເກີດຂຶ້ນ. ການເຜີຍແຜ່ຂໍ້ມູນ-ຂ່າວສານ ຄວນໃຫ້ສອດຄ່ອງກັບແຜນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງຂອງໂຄງການ ເຊິ່ງສອດຄ່ອງກັບ ESS10. ສິ່ງຈຳເປັນໃນການເຜີຍແຜ່ຂໍ້ມູນຂອງໂຄງການປະກອບມີ: (a) ຈຸດປະສົງ, ລັກສະນະ ແລະ ຂະໜາດຂອງໂຄງການ; (b) ໄລຍະເວລາໃນການດຳເນີນຂອງກິດຈະກຳຂອງໂຄງການ; (c) ຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ຜົນກະທົບຕໍ່ກັບຊຸມຊົນທ້ອງຖິ່ນ ທີ່ອາດເກີດຂຶ້ນຈາກໂຄງການ, ໂດຍສະເພາະແມ່ນກຸ່ມຄົນອ່ອນແອ/ຜູ້ດ້ອຍໂອກາດ ພ້ອມທັງສະເໜີມາດຕະການເພື່ອຫຼຸດຜ່ອນ; (d) ສະເໜີຂັ້ນຕອນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ ທີ່ຊີ້ໃຫ້ເຫັນເຖິງວິທີການທີ່ຈະຖືກຈັດຕັ້ງປະຕິບັດ ເພື່ອສົ່ງເສີມການມີສ່ວນຮ່ວມທີ່ສຳຄັນຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການ; (e) ເວລາ ແລະ ສະຖານທີ່ຂອງກອງປະຊຸມປຶກສາຫາລືກັບປະຊາຊົນ ແລະ ຂະບວນການຕ່າງໆ ທີ່ກອງປະຊຸມຈະໄດ້ແຈ້ງໃຫ້ຮັບຮູ້ ພ້ອມສັງລວມຜົນຂອງກອງປະຊຸມ ແລ້ວລາຍງານກັບຄືນພາກສ່ວນກ່ຽວຂ້ອງຂອງໂຄງການ; ແລະ (f) ຂະບວນການ ແລະ ວິທີການທີ່ສາມາດຮັບຄຳຮ້ອງທຸກໄດ້ ແລະ ແກ້ໄຂທັນເວລາ.

ການປຶກສາຫາລື. ຂະບວນການປຶກສາຫາລືແບບສອງທາງ (a) ແຕ່ເລີ່ມຕົ້ນຂອງຂະບວນການວາງແຜນໂຄງການເພື່ອເກັບກຳຄວາມຄິດເຫັນເບື້ອງຕົ້ນ ກ່ຽວກັບການສະເໜີໂຄງການ ແລະ ແຈ້ງການກ່ຽວກັບອອກແບບໂຄງການ; (b) ຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງໃຫ້ສະແດງຄຳຄິດເຫັນ ໂດຍສະເພາະແມ່ນການແຈ້ງການອອກແບບໂຄງການ ແລະ ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງໃນການກຳນົດມາດຕະການຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ; (c) ປະຕິບັດຢ່າງຕໍ່ເນື່ອງ ເມື່ອຄວາມສ່ຽງ ແລະ ຜົນກະທົບເກີດຂຶ້ນ; (d) ອີງໃສ່ການແຈກຢາຍ ແລະ ການເຜີຍແຜ່ຂໍ້ມູນທີ່ກ່ຽວຂ້ອງ, ມີຄວາມໂປ່ງໃສ, ຈຸດປະສົງ, ມີຄວາມຫມາຍ ແລະ ເປັນຂໍ້ມູນທີ່ສາມາດເຂົ້າເຖິງໄດ້ງ່າຍ ໃນໄລຍະເວລາທີ່ເໝາະສົມທີ່ຊ່ວຍໃຫ້ການປຶກສາຫາລືມີຄວາມໝາຍກັບຜູ້ທີ່ມີສ່ວນຮ່ວມຂອງໂຄງການໃນຮູບແບບທີ່ເໝາະສົມກັບເອກະລັກທາງວັດທະນະທຳ ແລະ ເປັນພາສາທ້ອງຖິ່ນທີ່ກ່ຽວຂ້ອງ ເຊິ່ງຜູ້ເຂົ້າຮ່ວມສາມາດເຂົ້າໃຈໄດ້; (e) ພິຈາລະນາ ແລະ ໃຫ້ຄຳຕອບຕໍ່ຄຳຄິດຄຳເຫັນ; (f) ສະໜັບສະໜູນການມີສ່ວນຮ່ວມຢ່າງຕັ້ງໜ້າ ຂອງຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ; (g) ບໍ່ມີຄ່າໃຊ້ຈ່າຍພາຍນອກ, ການແຊກແຊງ, ການບີບບັງຄັບ ນາບຄູ່ ແລະ ການຈຳແນກ; ແລະ (h) ເປັນເອກະສານ ແລະ ເຜີຍແຜ່ໂດຍລັດຖະບານ.

ບຸກຄົນ/ຄອບຄົວທຸກຍາກ. ຄົວເຮືອນ ທີ່ດຳລົງຊີວິດຕ່ຳກວ່າເສັ້ນຄວາມທຸກຍາກແຫ່ງຊາດ ເຊິ່ງກຳນົດໂດຍລັດຖະບານ ສປປ ລາວ ຫຼື ອ້າງອີງເຖິງເສັ້ນຄວາມທຸກຍາກ ທີ່ກຳນົດຂຶ້ນໂດຍທະນາຄານໂລກ ປະຈຳ ສປປ ລາວ ໄດ້ນຳໃຊ້ໃນປີ 2019 (ເຊິ່ງແມ່ນ 280.910 ກີບຕໍ່ເດືອນຕໍ່ຄົນ). ສຳລັບໂຄງການນີ້, ເສັ້ນຄວາມທຸກຍາກແຫ່ງຊາດ ທີ່ໄດ້ປັບປຸງເທື່ອສຸດທ້າຍ ທີ່ກຳນົດໂດຍທະນາຄານໂລກ ຄວນຈະໄດ້ຮັບການນຳໃຊ້.

ການດຳລົງຊີວິດຢູ່ຊົນນະບົດ. ກິດຈະກຳສ້າງລາຍຮັບຢູ່ໃນ ແລະ ນອກ ການຜະລິດກະສິກຳ ຫຼາຍກວ່າການຈັບຈ່າຍ. ຊີວິດການເປັນຢູ່ໃນເຂດຊົນນະບົດຈະຖືວ່າໄດ້ຮັບການປັບປຸງ ເມື່ອເວລາທີ່ຄອບຄົວ ມີຄວາມສາມາດປັບໂຕ ກັບຜົນກະທົບດ້ານເສດຖະກິດ ແລະ ການປ່ຽນແປງດິນຟ້າອາກາດ ໄດ້ດີຂຶ້ນ ໂດຍຕົວຊີ້ວັດຄວາມຫຼາກຫຼາຍຂອງແຫຼ່ງລາຍຮັບ.

ເປົ້າໝາຍຊຸມຊົນທີ່ທຸກຍາກ. ບັນດາບ້ານທີ່ຖືກຄັດເລືອກ ໂດຍອີງໃສ່ລະດັບຄວາມທຸກຍາກ ແລະ ຄວາມສ່ຽງຕໍ່ຜົນກະທົບດ້ານກະສິກຳ ແລະ ການປ່ຽນແປງສະພາບດິນຟ້າອາກາດ.

ບົດສະຫຼຸບຫຍໍ້

ແຜນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ (SEP) ໄດ້ຖືກກະກຽມໂດຍກະຊວງກະສິກຳ ແລະ ປ່າໄມ້ ສຳລັບໂຄງການປັບປຸງຊີວິດການເປັນຢູ່ ແລະ ປັບຕົວກັບການປ່ຽນແປງດິນຟ້າອາກາດ ຫຼື CLEAR (P178545). SEP ຈະນຳໃຊ້ກັບທຸກການລົງທຶນພາຍໃຕ້ໂຄງການ CLEAR ທີ່ຈະໄດ້ຮັບທຶນຈາກທະນາຄານໂລກ (WB) ແລະ ລັດຖະບານ ສປປ ລາວ. SEP ໄດ້ຮັບການກະກຽມ ໃຫ້ສອດຄ່ອງກັບກອບສິ່ງແວດລ້ອມ ແລະ ສັງຄົມ (ESF) ຂອງທະນາຄານໂລກ. ເອກະສານສະບັບນີ້ ແມ່ນເອກະສານທີ່ຍືດຍຸ່ນ ເຊິ່ງສາມາດປັບປຸງໃຫ້ສອດຄ່ອງ ກັບສະພາບການປ່ຽນແປງຂອງໂຄງການໃນແຕ່ລະໄລຍະ ຫຼື ດັດແປງຂອບເຂດຂອງກິດຈະກຳ.

ສັງລວມຫຍໍ້ກ່ຽວກັບໂຄງການ

ຈຸດປະສົງຂອງການພັດທະນາໂຄງການ ທີ່ຖືກສະເໜີມາ ແມ່ນເພື່ອສ້າງຄວາມຫຼາກຫຼາຍ ແລະ ເພີ່ມລາຍຮັບ ລວມທັງການປັບປຸງດ້ານໂພຊະນາການຂອງຄົວເຮືອນ ສຳລັບເປົ້າໝາຍຊຸມຊົນທຸກຍາກ ໃນແຂວງທີ່ຖືກເລືອກ ແລະ ໃນກໍລະນີເກີດວິກິດການ ຫຼື ພາວະສຸກເສີນ ຕ້ອງດຳເນີນການຕອບ�โต້ໄດ້ທັນທີ ແລະ ມີປະສິດທິຜົນ.

ແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ (SEP)

SEP ສ້າງຂຶ້ນເພື່ອຮັບປະກັນ ວ່າຊຸມຊົນທີ່ຢູ່ໃນຂອບເຂດໂຄງການ ເຊັ່ນດຽວກັບພາກສ່ວນກ່ຽວຂ້ອງອື່ນໆ ໄດ້ຮັບການແຈ້ງໃຫ້ຊາບ ແລະ ມີສ່ວນຮ່ວມໃນທຸກຂັ້ນຕອນຂອງການກະກຽມ ແລະ ການຈັດຕັ້ງປະຕິບັດໂຄງການ. ໂຄງການເຫັນໄດ້ເຖິງຄວາມຈຳເປັນໃນການຊອກຫາຕົວແທນ, ຄຳຄິດເຫັນການຕຳນິຕິຊົມ ແລະ SEP ຍັງແມ່ນເພື່ອສົ່ງເສີມບົດບາດຂອງແມ່ຍິງ ແລະ ກຸ່ມຄົນອ່ອນແອ ໃຫ້ມີສ່ວນຮ່ວມໃນການວາງແຜນ ແລະ ການຈັດຕັ້ງປະຕິບັດໂຄງການ. ນອກຈາກນັ້ນໂຄງການຍັງວິເຄາະຄວາມສຳຄັນຂອງການປຶກສາຫາລືກັບຊຸມຊົນ ກ່ຽວກັບມາດຕະການຫຼຸດຜ່ອນຜົນກະທົບ ພ້ອມທັງສືບຕໍ່ຕິດຕາມກວດກາກິດຈະກຳຂອງໂຄງການ.

SEP ກຳນົດພາກສ່ວນກ່ຽວຂ້ອງທີ່ໄດ້ຮັບຜົນກະທົບ: ຜູ້ທີ່ໄດ້ຮັບຜົນກະທົບໂດຍກົງ ຈາກການລົງທຶນຂອງໂຄງການ ແລະ ພາກສ່ວນກ່ຽວຂ້ອງທີ່ມີຄວາມສົນໃຈ: ຜູ້ທີ່ມີຄວາມສົນໃຈ ຫຼື ຄວາມກັງວົນໃນໂຄງການ. SEP ອະທິບາຍແກ່ພາກສ່ວນທີ່ກ່ຽວຂ້ອງຕ່າງໆເຫຼົ່ານີ້ ແລະ ກຳນົດວິທີການ ແລະ ເວລາສະເພາະ ເພື່ອສົ່ງເສີມໃຫ້ພວກເຂົາມີສ່ວນຮ່ວມໃນຂັ້ນຕອນຕ່າງໆຂອງໂຄງການ. SEP ຍັງອະທິບາຍເຖິງປະເພດຂອງບັນດາຂໍ້ມູນ ທີ່ຈະຖືກເຜີຍແຜ່ສູ່ສາທາລະນະ ເມື່ອເວລາກິດຈະກຳການປຶກສາຫາລືຈະໄດ້ຈັດຂຶ້ນ, ເຮັດແນວໃດໃຫ້ຄຳຄິດເຫັນຂອງພາກສ່ວນທີ່ກ່ຽວຂ້ອງ ຈະໄດ້ຮັບການພິຈາລະນາ ແລະ ເຂົ້າສູ່ຂະບວນການແກ້ໄຂຄຳຮ້ອງທຸກ.

ສົ່ງເສີມການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ

ຈຸດປະສົງຫຼັກຂອງວຽກງານສົ່ງເສີມການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ ແມ່ນເພື່ອຮັບປະກັນວ່າພາກສ່ວນກ່ຽວຂ້ອງ ກັບໂຄງການ ແມ່ນໄດ້ຮັບການສົ່ງເສີມການມີສ່ວນຮ່ວມຈາກໂຄງການ ແລະ ມີສ່ວນຮ່ວມຢ່າງເຕັມສ່ວນ ໃນການປຶກສາຫາລືລະຫວ່າງການອອກແບບ ແລະ ການຈັດຕັ້ງປະຕິບັດໂຄງການ ໂດຍສະເພາະໃນໄລຍະທີ່ພາກສ່ວນທີ່ກ່ຽວຂ້ອງ ມີຄຳຄິດເຫັນກ່ຽວກັບຄວາມສ່ຽງ ແລະ ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ລວມທັງການວາງມາດ

ຕະການຫຼຸດຜ່ອນຜົນກະທົບ, ສິ່ງສຳຄັນເປັນຢ່າງຍິ່ງ ແມ່ນການແຈ້ງຕໍ່ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບຍຸດທະສາດ ການເຂົ້າໄປຊ່ວຍເຫຼືອຂອງໂຄງການ. ໂຄງການຈະໄດ້ປຶກສາຫາລືກັບບັນດາພາກສ່ວນກ່ຽວຂ້ອງ ໃນທຸກຂັ້ນຕອນຂອງຮອບວຽນການຈັດຕັ້ງປະຕິບັດໂຄງການ ໂດຍສະເພາະໃນການອອກແບບເບື້ອງຕົ້ນກ່ຽວກັບ ໂຄງລ່າງພື້ນຖານ ໃນໄລຍະກ່ອນການກໍ່ສ້າງ ແລະ ໃນລະຫວ່າງການກໍ່ສ້າງ.

ການປຶກສາຫາລື ແລະ ການເຜີຍແຜ່ຂໍ້ມູນ-ຂ່າວສານ

ໃນໄລຍະການກະກຽມໂຄງການ, ມີຫຼາຍກອງປະຊຸມປຶກສາຫາລື ຂັ້ນບ້ານໄດ້ຖືກຈັດຂຶ້ນ ໃນເດືອນມັງກອນ 2023. ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອປຶກສາຫາລືກັບພາກສ່ວນກ່ຽວຂ້ອງ ທີ່ອາດຈະໄດ້ຮັບຜົນກະທົບ ແລະ ມີຄວາມສົນໃຈກ່ຽວກັບ ເຄື່ອງມືປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ ທີ່ໄດ້ກະກຽມສຳລັບໂຄງການ.

ຮ່າງເອກະສານກ່ຽວກັບ ESF, ລວມທັງ SEP, ໄດ້ຖືກເຜີຍແຜ່ໃນວັນທີ 14 ກຸມພາ 2023 ຢູ່ໃນເວັບໄຊທ໌ຂອງໂຄງການກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) (https://www.prflaos.org/) ຫຼື ລິ້ງເຂົ້າເຖິງໄດ້ເລີຍແມ່ນ https://www.prflaos.org/library/iec-materials-and-tools/manuals. ອີງຕາມຄຳຄິດຄຳເຫັນຂອງປະຊາຊົນຜ່ານການປຶກສາຫາລື, ຮ່າງເອກະສານດັ່ງກ່າວນີ້ ຍັງຈະໄດ້ຮັບການປັບປຸງເທື່ອສຸດທ້າຍ ແລະ ຈະເຜີຍແຜ່ໃໝ່ຜ່ານຊ່ອງທາງດຽວກັນນີ້ ເພື່ອໃຫ້ຜູ້ມີສ່ວນຮ່ວມໂຄງການໄດ້ຮັບຮູ້.

ຊັບພະຍາກອນ ແລະ ພາກສ່ວນຮັບຜິດຊອບ ໃນການຈັດຕັ້ງປະຕິບັດກິດຈະກຳການມີສ່ວນຮ່ວມຂອງພາກສ່ວນກ່ຽນຂ້ອງ

ໜ່ວຍງານຄຸ້ມຄອງໂຄງການ (PMU) ຈະຮັບຜິດຊອບໃນການຈັດຕັ້ງປະຕິບັດກິດຈະກຳການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ. ຂໍ້ມູນການຕິດຕໍ່ ຂອງຜູ້ຮັບຜິດຊອບຫຼັກ ດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງ PMU ທີ່ສາມາດຕິດຕໍ່ໄດ້ເພື່ອໃຫ້ຄຳຄິດເຫັນ, ຄຳຕຳນິສິ່ງຂ່າວ ຫຼື ຕັ້ງຄຳຖາມກ່ຽວກັບໂຄງການ. ໃນກໍລະນີທີ່ມີການປ່ຽນແປງບຸກຄະລາກອນດັ່ງກ່າວນີ້ SEP ກໍຈະໄດ້ປັບປຸງເພື່ອຮູ້ວ່າມີການການປ່ຽນແປງພະນັກງານໃໝ່ ແລະ ຈະຖືກເປີດເຜີຍໂດຍຜ່ານຊ່ອງທາງດຽວກັນ ເພື່ອໃຫ້ຜູ້ມີສ່ວນຮ່ວມຂອງໂຄງການໄດ້ຮັບຊາບ. ການປ່ຽນແປງຈະໄດ້ຮັບການປັບປຸງຕາມເນື້ອໃນທີ່ໄດ້ຮັບການປຶກສາຫາລື.

ກົນໄກການແກ້ໄຂຄຳຮ້ອງທຸກ (GRM)

ຈຸດປະສົງຂອງ GRM ແມ່ນເພື່ອໃຫ້ຜູ້ທີ່ໄດ້ຮັບຜົນກະທົບໄດ້ມີຊ່ອງທາງທີ່ສະດວກ ໃນການຍົກບັນຫາຄວາມກັງວົນ ຫຼື ຄຳຮ້ອງທຸກທີ່ກ່ຽວຂ້ອງກັບໂຄງການ. GRM ໄດ້ແນະນຳວິທີການຮ້ອງທຸກ ຫຼື ວິທີການສະເໜີ ລວມທັງແບບຟອມ ແລະ ຊ່ອງທາງການຮ້ອງທຸກ. ເພື່ອອຳນວຍຄວາມສະດວກໃຫ້ແກ່ຂະບວນການແກ້ໄຂຄຳຮ້ອງທຸກ, ບັນດາຄຳຮ້ອງທຸກທີ່ໄດ້ຮັບ ຈະຖືກຮັບຮູ້ເປັນລາຍລັກອັກສອນ ແລະ ແກ້ໄຂພາຍໃນໄລຍະເວລາທີ່ກຳນົດໄວ້. ໃນຂະບວນການແກ້ໄຂ ຖ້າຫາກວ່າມີຄວາມຈຳເປັນ ກໍ່ຕ້ອງໄດ້ຈັດການປຶກສາຫາລືກັບຜູ້ທີ່ມີຄວາມຂັດຂ້ອງໝອງໃຈ ເພື່ອໃຫ້ມີຄວາມເຂົ້າໃຈ ແລະ ເຮັດໃຫ້ການແກ້ໄຂມີປະສິດທິຜົນ.

ການຕິດຕາມກວດກາ ແລະ ການລາຍງານ

ຈຸດປະສົງຂອງການຕິດຕາມກວດກາພາຍໃນ ຕໍ່ການຈັດຕັ້ງປະຕິບັດ SEP ແມ່ນເພື່ອໃຫ້ແນ່ໃຈວ່າກິດຈະກຳທີ່ກຳນົດໄວ້ໃນ SEP ແມ່ນຖືກຈັດຕັ້ງປະຕິບັດຢ່າງເໝາະສົມ ແລະ ທັນເວລາ. ພາຍໃຕ້ການຊີ້ນຳລວມຂອງຮອງຜູ້ອຳນວຍການ ພະນັກງານດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການ ແມ່ນຮັບຜິດຊອບໃນການຕິດຕາມກວດກາກິດຈະກຳທີ່ໄດ້ອະທິບາຍໄວ້ໃນ SEP ນີ້. ໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ, ພະນັກງານດັ່ງກ່າວຈະກະກຽມບົດລາຍງານການຕິດຕາມກວດກາພາຍໃນ ເປັນປະຈຳເດືອນສຳລັບກິດຈະກຳ SEP.

ຄ່າໃຊ້ຈ່າຍ ແລະ ງົບປະມານ

ຕົວຊີ້ວັດຄ່າໃຊ້ຈ່າຍສຳລັບການຈັດຕັ້ງປະຕິບັດ SEP ແມ່ນໄດ້ຄາດຄະເນໄວ້ໃນໄລຍະການກະກຽມໂຄງການເພື່ອຈຸດປະສົງຂອງການວາງແຜນງົບປະມານ. ຄ່າໃຊ້ຈ່າຍຕົວຈິງຂອງການປະຕິບັດ SEP ແມ່ນຂຶ້ນກັບຂອບເຂດ ແລະ ກິດຈະກຳທີ່ຈະຈັດຕັ້ງປະຕິບັດ, ໃນລະຫວ່າງການກະກຽມ ແລະ ການຈັດຕັ້ງປະຕິບັດໂຄງການ. ຄ່າໃຊ້ຈ່າຍອາດຈະໄດ້ຮັບການປັບປຸງເມື່ອສຳເລັດກຳນົດບັນຊີລາຍຊື່ຂອງໂຄງການຍ່ອຍ. ຄ່າໃຊ້ຈ່າຍທີ່ເກີດຂຶ້ນເປັນເອກະສານເພື່ອເຜີຍແຜ່ ແລະ ປຶກສາຫາລືຜ່ານສາທາລະນະ ແມ່ນກວມເອົາ ຜູ້ຮ່ວມສະໜອງທຶນ ແລະ ມີການຄາດຄະເນໃນ SEP ຂອງໂຄງການ.